## ບົດທີ 12

# ຫຼັກຖານຂອງອານາຈັກ ພາກຕົ້ນ



ເລື່ອງຄົນຂີ້ທູດ 8:1-4

ຊົງໂຜດຄົນໃຊ້ນາຍຮ້ອຍ 8:5-13

ຊົງໂຜດແມ່ເມຍຂອງ ເປໂຕ 8:14-17

(ມທ 8:18-22 ເອົາໄວ້ຮຽນໃນ ພາກ ຊ)



ຊົງຫ້າມລົມແລະທະເລ 8:23-27

ຊົງໂພດຊາວກາດາລາຜູ້ມີຜີສິງ 8:28-34

ພະເຢຊູ ຊົງໂພດຄົນເປ້ຍ 9:1-8

(ມທ 9:9-13 ເອົາໄວ້ຮຽນໃນ ພາກ ຊ)

(ມທ 9:14-17 ເອົາໄວ້ຮຽນໃນ ພາກ ຊ)



ລູກຊາວຂອງເຈົ້ານາຍ 9:18-19, 23-26

ຍິງເລືອດຕົກ 9:20-22

ຊົງໂພດຄົນຕາບອດສອງຄົນ 9:27-31

ຊົງໂພດຄົນປາກກືກ 9:32-34

(ມທ 9:35-38 ເອົາໄວ້ຮຽນໃນ ພາກ ຊ)

**1** ໃນບົດຮຽນນີ້ ເຮົາເລີ້ມຕົ້ນຮຽນເລື່ອງຫຼັກຖານຂອງອານາຈັກ.

ກ. ໃນ ມທ ບົດ 8 ແລະ 9 ມີຫົວເລື່ອງໃຫຍ່ຄືຫຍັງ? ______________________________

ຂ. ຫົວເລື່ອງນ້ອຍເດ? ____________________________________________________

**2** ໃນມທ ບົດ 8-9 ມີການອັດສະຈັນຈັກປະການ? ________________________________

ເຮົາຈະຮຽນການອັດສະຈັນນັ້ນ ເທື່ອລະປະການ.

<u>ເລື່ອງຄົນຂີ້ທູດ</u>

**3** ໃຫ້ອ່ານ ມທ 8:1-4 ພະຍາດຂີ້ທູດມີຫຼາຍແບບເຊິ່ງມີຄຳບັນຍາຍໃນຄຳພີເດີມລະບຽບພວກເລວີ ບົດ 13:2-4 ວ່າດັ່ງຕໍ່ໄປນີ້:

"ຖ້າບຸກຄະລິກຜູ້ໃດມີຕຸ່ມຫຼື ຂີ້ກ້ຽນ ຫຼື ດ່າງສີຂາວອ່ອນທີ່ໜັງຂອງກາຍແຫ່ງຕົນແລະສິ່ງນັ້ນໄດ້ກາຍເປັນເໝືອນດັ່ງໂລຄາຂີ້ທູດໃນໜັງກາຍແຫ່ງຕົນເຂົາຈຶ່ງພາຜູ້ນັ້ນໄປຫາທ່ານອາໂລນ ຜູ້ເປັນປະໂລຫິດຫຼື ລູກຊາຍຂອງທ່ານຜູ້ໜຶ່ງຜູ້ ໃດຂອງເພິ່ນທີ່ເປັນປະໂລຫິດແລະໃຫ້ປະໂລຫິດຈຶ່ງກວດຜິວໜັງບ່ອນທີ່ເປັນໂລກແລະ ຖ້າຂົນໃນບາດນັ້ນ ກາຍເປັນສີຂາວແລະຖ້າບາດນັ້ນເບິ່ງຄືເລິກກວ່າໜັງເປັນບາດຂີ້ທູດເມື່ອປະໂລຫິດກວດເຫັນສິ່ງນັ້ນແລ້ວກໍ່ປະກາດວ່າຜູ້ນັ້ນເປັນຖ່ອຍຮ້າຍ ຖ້າຜິວໜັງບ່ອນທີ່ເປັນນັ້ນຂາວແຕ່ປາກົດວ່າບໍ່ເລິກໄປກວ່າຜິວໜັງແລະຂົນໃນບໍລິເວນນັ້ນບໍ່ໄດ້ກາຍເປັນສີຂາວປະໂລຫິດຈຶ່ງໃຫ້ເຂົາຂັງຜູ້ທີ່ເປັນບາດໄວ້ 7 ມື້."

ພະຍາດຂີ້ທູດນັ້ນຢູ່ໃນອະໄວ ຍະວະໃດ? ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ

ກ. ຕັບ ຂ. ຜິວໜັງ ຄ. ຫົວໃຈ

**4** ປະໂລຫິດໃນສະໄໝພະຄຳພີເດີມລັບພາລະເປັນຜູ້ກວດພະຍາດຂີ້ທູດດ້ວຍ.

ລະບຽບພວກເລວີ 13:45-46 ບອກວ່າ:

"ຄົນຂີ້ທູດທີ່ເປັນພະຍາດຕິດຕໍ່ໄດ້ ກໍ່ຈຶ່ງຫົ່ມເສື້ອຜ້າຂາດຈີກແລ້ວແລະ ຢູ່ຫົວເປົ່າບໍ່ຫວີຜົມຈິ່ງເອົາຜ້າປົກ ໜວດແລ້ວຈຶ່ງຮ້ອງວ່າ *'ເປັນຖ່ອຍຮ້າຍ ຖ່ອຍຮ້າຍ'* ເຂົາຈະເປັນມົນທິນຕະຫຼອດເວລາທີ່ເຂົາເປັນພະຍາດໂລກຕິດຕໍ່ ແລະ ຕ້ອງຢູ່ນອກຄ້າຍທີ່ພັກຫ່າງຈາກຄົນອື່ນ."

ເພື່ອພະຍາດຈະບໍ່ຕິດຜູ້ອື່ນຄົນຂີ້ທູດຕ້ອງຢູ່ຢ່າງໃດ? (ໃຫ້ເລືອກ)

ກ. ຢູ່ໃນໂຮງໝໍ ຂ. ຢູ່ຮ່ວມກັບຍາດພີ່ນ້ອງ. ຄ. ແຍກອອກຈາກຄົນອື່ນ.

**5** ກ. ຄົນຂີ້ທູດໃນ ມທ 8:1-4 ມີພະຍາດຢູ່ອະໄວຍະວະໃດ? ________________________

ຂ. ເພື່ອຈະບໍ່ຕິດກັບຜູ້ອື່ນເພິ່ນຕ້ອງຢູ່ຢ່າງໃດ? ________________________________

**6** ຕະຫຼອດບົດ 13 ແລະ 14 ຂອງ ລະບຽບຂອງພວກເລວີເວົ້າເຖິງພະຍາດຂີ້ທູດຈຶ່ງສະແດງວ່າຄົນໃນສະໄໝນັ້ນຖື ວ່າເປັນພະຍາດຢ່າງໃດ? (ເລືອກ)

ກ. ພະຍາດທີ່ອັນຕະລາຍ. ຂ. ພະຍາດບໍ່ອັນຕະລາຍ ຄ. ພະຍາດທີ່ປົວໄດ້ງ່າຍ

**7** ກ. ພະຍາດຂີ້ທູດປາກົດມາຢ່າງໃດ? ________________________________

ຂ. ເຂົາປ້ອງກັນບໍ່ໃຫ້ຕິດຢ່າງໃດ? ________________________________

**8** ພະຍາດຂີ້ທູດເປັນຕາໜ້າຢ້ານແລ້ວມີກົດລະບຽບຫຼາຍປະການເລື່ອງພະຍາດນັ້ນ. ພວກຟາລິຊາຍກໍ່ຍິ່ງຊັງເຂົາ ຈົນວ່າເຂົາຈະຄວ່າງກ້ອນຫີນໄຫຼ່ຂີ້ທູດໃຫ້ໜີໄປ.

ໃນ ມທ 8:3 ພະເຢຊູ ຢຽດມືເຮັດຫຍັງໃສ່ເພິ່ນ? ____________________________

**9** ພະເຢຊູ ສະແດງຄວາມຮັກຕໍ່ພວກເຂົາມັກສາສະໜາຜູ້ອື່ນໆບໍ່ຢາກຢູ່ໃກ້ກັບເຂົາຈັກດີ້ ເພາະພະຍາດນັ້ນເປັນທີ່ຂີ້ ດຽດແທ້. ພະເຢຊູ ສາມາດຈະປິ່ນປົວພວກເຂົາທາງໃດກໍ່ໄດ້ ແຕ່ພະເຢຊູ ສະແດງຄວາມຮັກຕໍ່ພວກເຂົາດ້ວຍເຮັດຫຍັງກັບເຂົາກ່ອນ? ____________________

**10** ພະເຢຊູ ຢຽດມືອອກມາຖືກເຂົາຍິ່ງກວ່ານັ້ນອີກພະອົງຮັກສາໃຫ້ພວກເຂົາດີສະອາດ. ການນັ້ນແຫຼະເປັນຫຼັກຖານ ຂອງອານາຈັກທີ່ຈະຕັ້ງຂຶ້ນມາ.

ກ. ພະຍາດຂີ້ທູດເປັນພະຍາດທີ່ເກີດໃນສ່ວນໃດ? ________________________

ຂ. ເຂົາເຮັດຢ່າງໃດຈຶ່ງປ້ອງກັນບໍ່ໃຫ້ຕິດຜູ້ອື່ນ? __________________________

ຄ. ພະເຢຊູ ສະແດງຄວາມຮັກຕໍ່ຂີ້ທູດດ້ວຍເຮັດຫຍັງ? _______________________

*ພະເຢຊູ ສະແດງຄວາມຮັກຕໍ່ຄົນທຸກຍາກໃນປະຈຸບັນນີ້ດ້ວຍ ແຕ່ຄວາມຮັກຂອງພະອົງປາກົດອອກມາໃນຊີວິດຂອງພວກຄຼິດສະຕຽນເຮົາ ຄືບໍ່ແມ່ນມືຂອງພະເຢຊູ ທີ່ຖືກເຂົາແຕ່ເປັນມືຂອງພວກເຮົາ.*

<u>ຊົງໂຜດຄົນໃຊ້ນາຍຮ້ອຍ</u>

**11** ໃຫ້ທ່ານອ່ານຈາກ ມທ 8:5-13 ແລະ ໃຫ້ທ່ານເປີດອ່ານໃນ ລູກາ 7:2-5 ມາປຽບທຽບດ້ວຍກັນ. ນາຍຮ້ອຍນັ້ນມີລັກສະນະຢ່າງໃດທີ່ຊາດຢິວນິຍົມ?

(ໃຫ້ທ່ານໃຊ້ວິທີສັງເກດແລະໝາຍ √ ໃສ່ອັນທີ່ພະຄຳພີບັນທຶກໄວ້)

ກ. ______ ເພິ່ນຮັກຄົນໃຊ້ນັ້ນຫຼາຍ.

ຂ. ______ ເພິ່ນເປັນຄົນທີ່ເຊື່ອໃນອຳນາດຂອງ ພະເຈົ້າ

ຄ. ______ ເພິ່ນຮັກປະເທດຊາດຢິວ

ງ. ______ ເພິ່ນຊັງຄົນຢິວ

ຈ. ______ ເພິ່ນໄດ້ສ້າງໂຮງທຳມະເທດສະໜາໃຫ້ຄົນຢິວ

ສ. ______ ເພິ່ນໄດ້ສ້າງພະວິຫານໄວ້ເພື່ອດວງຕາເວັນເຊິ່ງເປັນພະເຈົ້າຂອງໂລມ

ຊ. ______ ເພິ່ນສອນຊາດໂລມໃຫ້ຮູ້ເລື່ອງ ພະຜູ້ເປັນເຈົ້າ.

**12** ໃນລູກາ 7:4 ພວກເຖົ້າແກ່ຢິວບອກວ່າສົມຄວນທີ່ ພະເຢຊູຈະຊ່ວຍໃຜ? ____________

**13** ໃນມທ 8:8 ເພິ່ນຖືຕົວເອງວ່າເປັນຜູ້ມີກຽດບໍ່? ____________________________

**14** ຜູ້ອື່ນວ່າສົມຄວນແຕ່ເພິ່ນເອງຖືຕົວວ່າບໍ່ສົມຄວນ ປາກົດວ່າມີລັກສະນະດີອີກທີ່ເຖົ້າແກ່ຢິວບໍ່ສັງເກດຄືລັກສະນະ ໃດ? (ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ)

______ ໃຈກວ້າງ ______ ໃຈຮັກ ______ ຖ່ອມໃຈ

**15** ນາຍຮ້ອຍນັ້ນມີອາຊີບໃດ? (ເລືອກ)

ກ. ທະຫານ ຂ. ສາສະດາຈານ ຄ. ກຳມະກອນ.

**16** ພວກນາຍຮ້ອຍທະຫານປົກຄອງທະຫານຈັກຄົນ? (ເລືອກ)

ກ. ສິບຄົນ ຂ. 100 ຄົນ ຄ. ພັນຄົນ

**17** ນາຍຮ້ອຍນັ້ນເປັນທະຫານປະເພດໃດ? (ເລືອກ)

ກ. ທະຫານລາດ ຂ. ຜູ້ບັນຊາການທະຫານສູງສຸດ ຄ. ຜູ້ບັງຄັບກອງຮ້ອຍ

**18** ຂໍໃຫ້ອ່ານ ມທ 8:9 ເທື່ອໃດທີ່ນາຍຮ້ອຍສັ່ງທະຫານໃຫ້ເຮັດອັນນີ້ ຫຼື ອັນນັ້ນເຂົາກໍ່ເຮັດຕາມບໍ່?

________________________________________________________________

**19** ພະເຢຊູ ພ້ອມໃຈທີ່ຈະໄປເຮືອນຂອງນາຍຮ້ອຍນັ້ນ ແຕ່ນາຍຮ້ອຍວ່າບໍ່ສົມຄວນ ເພາະເພິ່ນຖືວ່າຕົວເອງນັ້ນ ນ້ອຍກວ່າພະເຢຊູ ຫຼາຍ ຄືພະອົງມີອຳນາດຫຼາຍ. ນາຍຮ້ອຍຢາກໃຫ້ ພະເຢຊູ ສັ່ງຫຍັງ? (ເລືອກ)

ກ. ສັ່ງພວກທະຫານ ຂ. ຄົນເຈັບໃຫ້ມາຫາ ຄ. ສັ່ງພະຍາດໃຫ້ຫາຍ

**20** ນາຍຮ້ອຍຍົກເລື່ອງອຳນາດຂອງນາຍທະຫານມາປຽບກັບອຳນາດຂອງ ພະເຢຊູເໜືອພະຍາດ. ເວລາໃດນາຍ ຮ້ອຍອອກຄຳສັ່ງພວກທະຫານຕ້ອງຟັງ ເຊັ່ນດຽວກັນຖ້າວ່າພະເຢຊູ ຈະອອກຄຳສັ່ງພະຍາດກໍ່ຕ້ອງຫາຍໄປ.

ກ. ນາຍຮ້ອຍຮູ້ວ່າຄັນ ພະເຢຊູ ລົງຄຳສັ່ງຜູ້ທີ່ເຈັບຈະເປັນຢ່າງໃດ? ________________

ຂ. ນາຍຮ້ອຍເຊື່ອວ່າພະເຢຊູມີອຳນາດບໍ່? ________________________________

**21** ໃນຂໍ້ 10 ພະເຢຊູນິຍົມນາຍຮ້ອຍທະຫານໂລມນັ້ນວ່າ ມີຄວາມເຊື່ອຫຼາຍກວ່າພວກຊາດໃດ?

________________________________________________________________

**22** ຖ້າຫາກ ນາຍຮ້ອຍຮັບຮູ້ວ່າພະເຢຊູເປັນຜູ້ມີອຳນາດແລ້ວເພິ່ນກໍເລີຍເກີນກວ່າຄົນຢິວໃນດ້ານໃດ? ____________________________________________________________

**23** ກ. ເມື່ອນາຍຮ້ອຍຮັບວ່າບໍ່ສົມຄວນທີ່ ພະເຢຊູຈະໄປເຮືອນເພິ່ນໝາຍຄວາມວ່າເພິ່ນສະແດງລັກສະນະໃດ?____________________________________________________

ຂ. ຕອນເພິ່ນຮັບຮູ້ວ່າພະເຢຊູມີອຳນາດເພິ່ນສະແດງເຖິງຫຍັງ? __________________

**24** ພະເຢຊູ ນິຍົມຄວາມເຊື່ອຂອງນາຍຮ້ອຍນັ້ນ ໃນ ມທ 8:8 ເຫັນວ່າເພິ່ນເຊື່ອຈິນເຖິງຂະໜາດໃດ? (ເລືອກ)

ກ. ພະເຢຊູ ຢູ່ໄກກໍ່ຕາມຍັງປິ່ນປົວໄດ້ ຂ. ຢຽດມືຖືກຄົນເຈັບກໍ່ພໍແລ້ວ

ຄ. ກ່າວຄວາມເທົ່ານັ້ນພະຍາດຈະຫາຍ ງ. ຈະປົວແຕ່ຄົນທີ່ສົມຄວນ

ຈ. ຈະຕ້ອງລົງຄຳສັ່ງແບບທະຫານ

**25** ຈົ່ງອ່ານ ມທ 8:10-12

ກ. ພະເຢຊູ ນິຍົມໃຜວ່າມີຄວາມເຊື່ອ? ______________________________

ຂ. ພະເຢຊູບອກວ່າຝ່າຍຊາວແຜ່ນດິນ (ຄືຢິວ) ທີ່ບໍ່ເຊື່ອໃນພະອົງຈະຖືກຫຍັງ?

______________________________________________________

ຄ. ພະເຢຊູ ບອກອີກວ່າຄົນຈາກທິດຕາເວັນອອກແລະທິດຕາເວັນຕົກ (ຄືຄົນທີ່ບໍ່ເປັນຊາດຢິວເຊັ່ນນາຍ ຮ້ອຍນັ້ນ) ທີ່ເຊື່ອໃນ ພະເຢຊູຈະນັ່ງຮ່ວມໂຕະກັບໃຜ?

______________________________________________________

ງ. ຜົນສຸດທ້າຍຄົນໃຊ້ຂອງນາຍຮ້ອຍດີບໍ່? ______________________________

**26** ນາຍຮ້ອຍມີຄວາມເຊື່ອພຽງໃດ? ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້

ກ. ພະເຢຊູ ຈະປິ່ນປົວຈາກ ______________________________ ໄດ້.

ຂ. ພະເຢຊູ ຈະປົວໄດ້ດ້ວຍຄຳ ______________________________ ເທົ່ານັ້ນ.

**27** ກ. ເມື່ອນາຍຮ້ອຍເວົ້າວ່າ ບໍ່ສົມຄວນທີ່ ພະເຢຊູຈະໄປເຮືອນຂອງເພິ່ນສະແດງເຖິງລັກສະນະ ໃດ? ______________________________

ຂ. ທີ່ເພິ່ນປຽບທຽບອຳນາດຂອງພະເຢຊູເໜືອພະຍາດກັບອຳນາດນາຍທະຫານເພິ່ນສະແດງ ເຖິງຫຍັງ? ______________________________

ຄ. ນາຍຮ້ອຍມີຄວາມເຊື່ອໃນອຳນາດຂອງ ພະເຢຊູສ່ຳໃດ? ____________________

ແລະ ______________________________

<u>ຊົງໂຜດແມ່ເມຍຂອງ ເປໂຕ</u>

**28** ໃຫ້ອ່ານ ມທ 8:14-17 ຕອນພະຄຳພີນີ້ເວົ້າເຖິງຜູ້ຍິງທີ່ໄຂ້ຢູ່ຜູ້ຍິງນັ້ນເປັນພີ່ນ້ອງຂອງອັກຄະສາ ວົກໃດ? ______________________________

**29** ເປັນຍາດແບບໃດ? (ເລືອກ)

ກ. ແມ່ຂອງເປໂຕ ຂ. ເອື້ອຍຂອງເປໂຕ

ຄ. ປ້າຂອງເປໂຕ ງ. ແມ່ເມຍຂອງເປໂຕ

*ຖ້າຫາກວ່າເປໂຕມີແມ່ເມຍແລ້ວໝາຍຄວາມວ່າເພິ່ນເປັນຄົນທີ່ແຕ່ງງານແລ້ວ. ໃນສາສະໜາພຸດ ນັກບວດມີເມຍບໍ່ໄດ້ ຜູ້ທີ່ເປັນຄຸນພໍ່ໃນກາໂຕລິກກໍ່ມີເມຍບໍ່ໄດ້ອີກດ້ວຍ. ການທີ່ມີເມຍ ຫຼື ບໍ່ມີອາດ ຈະໄດ້ປຽບຢ່າງໜຶ່ງຢ່າງໃດ ທັງສອງຝ່າຍຄື:*

*ຜູ້ທີ່ມີເມຍໄດ້ປາສົບການໃນບັນຫາຄອບຄົວ ຜູ້ທີ່ມີເມຍຈະບໍ່ຖືກທົດລອງດ້ານເພດປານຄົນບໍ່ມີ ເມຍ, ຜູ້ທີ່ມີເມຍມີຜູ້ສະນັບສະນຸນຢູ່ປະຈຳ*

*ແຕ່ວ່າ:*

*ຄົນທີ່ເປັນໂສດບໍ່ຕ້ອງຫ່ວງກັບການຮັກສາຄອບຄົວ ຄົນໂສດເຮັດວຽກບໍ່ຈຳກັດເວລາກໍ່ໄດ້.*

**30** ໃນຕອນພະຄຳພີທີ່ທ່ານອ່ານມາແລ້ວນັ້ນ

ກ. ກ່ອນ ພະເຢຊູ ບາຍມືແມ່ເມຍຂອງເປໂຕຢູ່ໃນສະພາບໃດ? ____________________

ຂ. ຫຼັງຈາກພະອົງບາຍມືເດ? ____________________________________________

ຄ. ນາງຈຶ່ງເຮັດຫຍັງຕໍ່ໄປ? _____________________________________________

**31** ໃຫ້ອ່ານ ລູກາ 4:39 ນາງລຸກຂຶ້ນບົວລະບັດພະອົງຕອນໃດ? (ເລືອກ)

ກ. ໃນທັນໃດນັ້ນ

ຂ. ຫຼັງຈາກເຮັດວຽກອື່ນ ໆ

ຄ. ພັກຜ່ອນກ່ອນຈົນກວ່າມີແຮງ

**32** ນັ້ນແຫຼະ! ເປັນຕົວຢ່າງທີ່ດີຝ່າຍເຮົາ. ໃນ 4 ຄົນຕໍ່ໄປນີ້ແມ່ນໃຜເຮັດຕາມຕົວຢ່າງນັ້ນ? (ເລືອກ)

ກ. "ເອີ ໆ ໆ ຈັກໜ່ອຍຈະໄປປະຊຸມແຕ່ອາດຈະຊ້າໄປດ້ວຍເພາະຢາກພັກຜ່ອນກ່ອນ."



ຂ. "ຖ້າວ່າຂ້ອຍຮຽນຫຼັກສູດນີ້ສຳເລັດຈະເລີ້ມຕົ້ນຕິດຕາມພະອົງແທ້ ໆ"

ຄ. "ຂ້າມອບຈິດໃຈໃຫ້ ພະເຈົ້າແລ້ວຢາກຈະຊ່ວຍວຽກໃນຄຼິດສະຕະຈັກດຽວນີ້."

ງ. "ຈະໄປອ້ອນວອນເພື່ອຄົນທີ່ມາປະຊຸມບໍ່ໄດ້ເພາະເຂົາເຈັບຢູ່."

**33** ກ. ແມ່ເມຍເປໂຕເປັນຕົວຢ່າງຕໍ່ເຮົາວ່າຈະບົວລະບັດໃຜ? ________________________

ຂ. ບົວລະບັດເມື່ອໃດ? ____________________________________________

**34** ໃນ ມທ 8:16 ເບິ່ງຄືວ່າພະເຢຊູປະຈຳໃນເຮືອນຂອງແມ່ເມຍເປໂຕຄາວໜຶ່ງເພື່ອຂັບໄລ່ຜີອອກແລະເຮັດໃຫ້ ຄົນເຈັບປ່ວຍດີຂຶ້ນມາ. ທີ່ ພະເຢຊູ ໃຫ້ຄົນຂີ້ທູດຫາຍດີ ໃຫ້ຄົນໃຊ້ນາຍຮ້ອຍດີ ໃຫ້ແມ່ເມຍເປໂຕດີຂຶ້ນມາ ໆລໆ ສະແດງເຖິງຄວາມສຳເລັດຂອງຄຳທຳນວາຍໃດ? (ໃຫ້ເບິ່ງຂໍ້ອ້າງທີ່ວ່າຄືກັບຂໍ້ໃດຂອງພະຄຳພີອື່ນ ຢູ່ລຸ່ມໜ້າ ມທ 8:17)

______________________________________________________________

| |
|---|
| ຝຶກ: ໃຫ້ທ່ານເອົາສໍສີແດງຂີດເສັ້ນກ້ອງ ມທ 8:17 ແລະ ເອຊາຢາ 53:4 ແລ້ວຂຽນຄຳ "ສຳເລັດ"ໃສ່ຂອບຂ້າງ ມທ 8:17 ນັ້ນ. |

*ບົດຮຽນນີ້ຍາວກວ່າໝູ່ ມາເຖິງປານນີ້ຮຽນມາໄດ້ເຄິ່ງໜຶ່ງແລ້ວຖ້າຫາກວ່າທ່ານຢາກພັກຜ່ອນຈັກໜ້ອຍກໍ່ໄດ້ຢູ່!*

<u>ຊົງຫ້າມລົມແລະທະເລ</u>

**35** ກ. ປະຈຸບັນນີ້ພວກເຮົາກຳລັງສຶກສາກ່ຽວກັບຫຼັກຖານຂອງອານາຈັກ ມທ 8 ແລະ 9 ໄດ້ບັນທຶກເລື່ອງການສຳ ແດງສິ່ງທີ່ ພະເຍຊູ ເຮັດການອັດສະຈັນຫຼາຍຢ່າງ. ທີ່ ພະເຍຊູຊ່ວຍໃຫ້ຄົນເຈັບຫາຍດີປົກກະຕິກໍ່ເປັນຄວາມສຳເລັດຕາມຄຳທຳນວາຍໃດ ໃນພະຄຳພີເດີມ? ____

ຂ. ເຊັ່ນດຽວກັນກັບນາຍຮ້ອຍທະຫານໂລມນັ້ນເຮົາຕ້ອງເຊື່ອວ່າພະເຍຊູ ມີ __________ ເໜືອພະຍາດ. (ຕື່ມຄວາມທີ່ຂາດ)

**36** (ມທ 8:18-22 ໄດ້ບັນທຶກເລື່ອງອີກຫົວເລື່ອງໜຶ່ງທີ່ເຮົາຈະເອົາໄວ້ຮຽນ ພາກ ຊ) ດັ່ງນັ້ນໃຫ້ທ່ານອ່ານ ມທ 8:23-27

ກ. ເມື່ອລົມພາຍຸພັດຈົນວ່າເຮືອຈະຈົມ ພະເຍຊູ ເຮັດຫຍັງ? ____________________

ຂ. ເມື່ອພວກສິດປຸກພະອົງຂຶ້ນມາເພິ່ນວ່າຫຍັງ? ____________________________

ຄ. ແລ້ວພະອົງເຮັດຫຍັງ? __________________________________________

**37** ໃຫ້ທ່ານປຽບທຽບ ມທ 8:26 ກັບ ມທ 8:10

ກ. ນາຍຮ້ອຍໂລມເຊື່ອວ່າ ພະເຍຊູ ມີອຳນາດເໜືອຫຍັງ? ____________________

ຂ. ແຕ່ພວກລູກສິດຂອງພະອົງບໍ່ເຊື່ອວ່າພະອົງມີອຳນາດເໜືອຫຍັງ? ______________

**38** ກ. ໃນຂໍ້ 27 ພວກລູກສິດມີໃຈຢ່າງໃດ? ________________________________

ຂ. ເວົ້າກັນຢ່າງໃດ? ______________________________________________

**39** ແມ່ນຜູ້ໃດມີຄວາມເຊື່ອຫຼາຍກວ່າ? (ເລືອກ)

______ນາຍຮ້ອຍທະຫານໂລມ ______ລູກສິດພະອົງ

**40** ຫຼັກຖານສອງປະການນີ້ສະແດງວ່າພະເຍຊູມີອຳນາດເໜືອສອງດ້ານໃດ? ___________

______________________________________________________________

<u>ຜູ້ທີ່ມີຜີສິງ</u>

**41** ໃຫ້ທ່ານອ່ານ ມທ 8:28-34




ຜູ້ມີຜີສິງນັ້ນຢູ່ເຂດແດນໃດ? ____________________________________

*ຂໍ້ ສັງເກດ: ໃນ ມັດທາຍ 8:28-34 ເອີ້ນຊື່ເຂົາວ່າ "ກາດາລາ" ໃນ ມາລະໂກ 5:1 ເວົ້າວ່າ "ເຄລະຊາ" ແລ້ວໃນ ລູກາ 8:26 ວ່າ "ເຄເຄຊັນ" ທີ່ຈິງທັງສາມຊື່ນັ້ນອ້າງເຖິງພວກດຽວກັນ ເຊັ່ນດຽວກັນກັບ "ພວກຂອມ" "ຂະເມນ" "ກຳປູເຈຍ" ກໍ່ເປັນຊື່ຊາດດຽວກັນ.*

**42** ອີກນ້ອຍໜຶ່ງພວກເຮົາຈະຮຽນເລື່ອງຜູ້ມີຜີສິງນັ້ນແຕ່ກ່ອນອື່ນຂໍໃຫ້ເຮົາຮັບພິຈາລະນາໜ້ອຍໜຶ່ງກ່ຽວກັບຄຳເວົ້າ ຂອງຄົນໃນຮູບກາຕູນນັ້ນທີ່ຫາຄວາມວ່າ ພະຄຳພີເວົ້າ 2 ຄວາມຢູ່ ຖ້າເປັນດັ່ງນັ້ນ ເຮົາຈະເຊື່ອໄດ້ຢ່າງໃດແທ້. ຄວາມຂັດແຍ່ງກໍ່ມີຄືຄວາມທີ່ເວົ້າກົງກັນຂ້າມ. ຖ້າວ່າທ່ານ ກ ເວົ້າວ່າ "ເຈ້ຍໃບນີ້ຂາວ" ແຕ່ທ່ານ ຂ ວ່າ "ເຈ້ຍໃບນີ້ດຳ" ກໍ່ເລີຍເປັນຄວາມຂັດແຍ່ງກັນເພາະເວົ້າກົງກັນຂ້າມ. ໃນຄຳເວົ້າຕໍ່ໄປນີ້ໃຫ້ທ່ານເລືອກເອົາຫົວຂໍ້ທີ່ຢູ່ກຳຂວາມາຈັບຄູ່ໃຫ້ຖືກກັບຂໍ້ໃດທີ່ກົງກັນຂ້າມຫຼືຂັດແຍ່ງກັນຢູ່ຊ້າຍມື.

| | |
|---|---|
| ______ ກ. ຜູ້ນັ້ນຕຸ້ຍຫຼາຍ | 1. ພະເຢຊູໄລ່ຜີອອກຈາກຍິງສອງຄົນ |
| ______ ຂ. ພະເຢຊູ ບໍ່ມີເວລາເລີ້ມຕົ້ນ | 2. ຜູ້ນັ້ນຈ່ອຍຫຼາຍ |
| ______ ຄ. ພະເຢຊູ ໄລ່ຜີອອກຈາກຊາຍສອງຄົນ | 3. ມື້ນີ້ອາກາດຮ້ອນຫຼາຍ |
| ______ ງ. ມື້ນີ້ອາກາດດີຫຼາຍ | 4. ພະເຢຊູ ມີວັນເລີ້ມຕົ້ນ |

**43** ຖ້າຄຳເວົ້າສອງຄຳກົງກັນຂ້າມໄປເປັນຄວາມໃດ? ______________________________

**44** ຄົນໃນຮູບກາຕູນເລີຍຫາຄວາມວ່າ ມັດທາຍແລະມາລະໂກເວົ້າກົງກັນຂ້າມຄືຄວາມໃດ? __

*ບາດນີ້ຈົ່ງສັງເກດ ດີ ໆ ເນີ!*

**45** ແຕ່ຄວາມຂັດແຍ່ງກັນ ບໍ່ແມ່ນອັນດຽວກັນກັບຄຳຫຍໍ້ ໃນເວລາທີ່ເຮົາຫຍໍ້ຄວາມ ເຮົາມີແຕ່ເຮັດໃຫ້ສັ້ນເຂົ້າເພື່ອຈະ ຂຽນຫຼື ເວົ້າໄດ້ງ່າຍກວ່າດັ່ງຕົວຢ່າງຕໍ່ໄປນີ້:

| ຄວາມເຕັມ: | ຄວາມຫຍໍ້: |
|---|---|
| ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ | ສ.ປ.ປ.ລ |
| ປະຖົມສຶກສາ ປີທີ 1 | ປ.1 |
| ມັດທະຍົມສຶກສາ ປີທີ 3 | ມ.3 |

ດັ່ງນັ້ນ ໃນ ມາລະໂກ ຂຽນວ່າ "ກໍ່ມີຄົນໜຶ່ງ" ເປັນຄຳຫຍໍ້ທີ່ມີຄວາມໝາຍເຖິງ "ໜຶ່ງໃນສອງຄົນ" ຫຼື "ໜຶ່ງໃນຫຼາຍຄົນ".

ຕົວຢ່າງ: ບາງຄົນເວົ້າວ່າ "ບໍ່ຈັກ" ເຮົາເຂົ້າໃຈຢູ່ ເພາະເປັນຄຳຫຍໍ້ ຄັນຖ້າວ່າຈະເວົ້າເຕັມຄວາມຈະວ່າຢ່າງໃດ? (ເລືອກ)

ກ. ບໍ່ຈັກໄປຫຍັງ ຂ. ບໍ່ຮູ້ຈັກ ຄ. ບໍ່ຈັກຊຸດນ້ຳສ້າງ.

**46** ທີ່ຈິງໃນພາສາລາວເຮົາເຄີຍໃຊ້ຄຳຫຍໍ້ຢູ່ຫຼາຍ ຖ້າຈະຫຍໍ້ຄຳ "ຢ່າຟ້າວກ່ອນ" ອາດຈະຫຍໍ້ພຽງແຕ່ "ຟ້າວ" ກໍ່ ໄດ້ແລະຄຳວ່າ "ຍັງເທື່ອ" ເວົ້າຫຍໍ້ "ຍັງ" ກໍ່ໄດ້.

ກ. ຖ້າຈະຫຍໍ້ຊື່ "ພິຊິດໄຊ" ຈະເອີ້ນຫຍໍ້ຄໍາດຽວຢ່າງໃດ? ______________________

ຂ. ຖ້າຊື່ "ມະນີວອນ" ເດ? ______________________

ຄ. ຖ້າຊື່ "ສຸພາພອນ" ເດ? ______________________

**47** ໃນການບັນທຶກແຕ່ລະເລື່ອງກໍ່ເຊັ່ນດຽວກັນ ສົມມຸດລົດສອງຄັນຕໍາກັນໃນຫົນທາງ ຕໍາລວດກໍ່ຈະລາຍງານຢ່າງໜຶ່ງແລະເດັກນ້ອຍທີ່ເຫັນກໍ່ອາດຈະລາຍງານເຫດການດຽວກັນແຕ່ຄົນລະແບບ.

ກ. ແມ່ນເດັກຫຼືຕໍາຫຼວດທີ່ບັນທຶກລະອຽດກວ່າ? ______________________

ຂ. ຜູ້ໃດຈະລາຍງານຢ່າງມ່ວນກວ່າ? ______________________

**48** ຜູ້ບັນທຶກຂ່າວປະເສີດອາດຈະຫຍໍ້ເອົາກໍ່ມີດ້ວຍ. ສ່ວນແຕກຕ່າງກັນນັ້ນເປັນຄວາມຂັດແຍ່ງກັນ ຫຼື ຄໍາຫຍໍ້? ______________________

**49** ກ. ຄວາມຂັດແຍ່ງກັນຄືຫຍັງ? ______________________

ຂ. ຄວາມຫຍໍ້ເດ? ______________________

**50** ແມ່ນຂ່າວປະເສີດມັດທາຍຫຼື ມາລະໂກ ທີ່ຫຍໍ້ເລື່ອງຜູ້ທີ່ມີຜີເຂົ້າສິງດ້ວຍເນັ້ນຄໍາແຕ່ເລື່ອງຜູ້ດຽວ? ______________________

**51** ມີທີ່ຫຍໍ້ເລື່ອງໃນຂ່າວປະເສີດອີກບ່ອນໜຶ່ງດ້ວຍຄື: ໃນການໂຜດຄົນໃຊ້ຂອງນາຍຮ້ອຍທີ່ເຮົາຮຽນມາແລ້ວ. ໃນເລື່ອງນັ້ນແມ່ນ ມັດທາຍ ທີ່ຫຍໍ້ເລື່ອງມັດທາຍ ຫຍໍ້ຄືວ່າແມ່ນນາຍຮ້ອຍເອງທີ່ມາຫາພະເຢຊູແຕ່ ລູກາ ບັນທຶກລາຍລະອຽດວ່າ ນາຍຮ້ອຍໃຊ້ໃຜມາຂໍ? (ອ່ານ ລກ 7:2-10)?

______________________

**52** ເທື່ອໃດທີ່ຜູ້ບັນທຶກຂ່າວປະເສີດເຮັດໃຫ້ເລື່ອງໃດເລື່ອງໜຶ່ງສັ້ນເຂົ້າມີຈຸດປະສົງວ່າຈະເນັ້ນຄໍາສ່ວນທີ່ສໍາຄັນກວ່າ. ຄໍາຊຽນຢ່າງນີ້ເອີ້ນວ່າຢ່າງໃດ? (ເລືອກ)

ກ. ຄໍາວິໄຈ ຂ. ຄໍາຂັດແຍ່ງ ຄ. ຄໍາຫຍໍ້.

**53** ຄັນມີຄົນມາກ່າວຫາວ່າ ຂ່າວປະເສີດມີຄໍາຊຽນຂັດແຍ່ງເລື່ອງໃນຊີວິດຂອງ ພະເຢຊູ ທ່ານອາດຈະຕອບຢ່າງ ໃດ? ______________________

**54** ພວກເຮົາເຫັນມາແລ້ວວ່າ ມາລະໂກ ຫຍໍ້ເລື່ອງຜູ້ທີ່ມີຜີສິງຈຶ່ງຈະເນັ້ນຄໍາແຕ່ເລື່ອງຜູ້ດຽວ. ໃຫ້ທ່ານອ່ານ ມາລະ ໂກ 5:15 ແລະ ມາລະໂກ 5:18-20 ຫຼັງຈາກຄົນນັ້ນພົບພະເຢຊູເພິ່ນເປັນຢ່າງໃດ? (ເລືອກ)

ກ. ດີແລ້ວ ຂ. ຄືແຕ່ກ່ອນ.

ຄ. ຢາກໃຫ້ ພະເຢຊູ ອອກໄປຈາກເຂດແດນຂອງເຂົາ ງ. ຢາກຕິດຕາມພະອົງໄປ.

ຈ. ພ້ອມຈະເປັນພິຍານເພື່ອ ພະເຢຊູ ສ. ເສຍໃຈເພາະໝູ ເສຍໄປ.

**55** ປະຊາຊົນສົມຄວນທີ່ຈະຂອບໃຈທີ່ ພະເຢຊູ ຊ່ວຍຜູ້ມີຜີສິງນັ້ນ ແຕ່ໃນ ມາລະໂກ 5:17 ຄົນເຫຼົ່ານັ້ນທູນຂໍຫຍັງ ຈາກພະເຢຊູ? ______________________________

**56** ແຕ່ຄວາມຄິດຂອງຄົນທີ່ດີຂຶ້ນມາແລ້ວບໍ່ເປັນຢ່າງນັ້ນເພາະເພິ່ນດີມາແລ້ວ.

ກ. ເພິ່ນຈຶ່ງຢາກຕິດຕາມໃຜ? ______________________________

ຂ. ພະເຢຊູ ບໍ່ໃຫ້ຕິດຕາມເພິ່ນຈຶ່ງພ້ອມໃຈເປັນພິຍານຕໍ່ໃຜ? ______________________

**57** ໃຫ້ອ່ານ ລູກາ 8:35-37 ຜູ້ທີ່ມີຜີສິງນັ້ນດີແລ້ວຈະບໍ່ລົບກວນຊາວບ້ານຕໍ່ໄປແຕ່ເຖິງຢ່າງໃດກໍ່ຕາມໄທບ້ານນັ້ນຍັງ ຮູ້ສຶກເປັນຢ່າງໃດ? (ເລືອກ)

ກ. ຢ້ານ ຄ. ຄວາມສຸກ.

ຂ. ຢູ່ສະຫງົບ ງ. ຂອບໃຈ.

**58** ປະຊາຊົນຢາກໃຫ້ ພະເຢຊູໄປເພາະເຂົາຢ້ານແທ້ ເພາະໝູ2000ໂຕຕາຍແລະເຂົາເຫັນຜູ້ມີອຳນາດເໜືອຜີ. ເຂົາ ຢ້ານຫຍັງແດ່? (ເລືອກ)

ກ. ລິດອຳນາດ ຂ. ໝູ່

ຄ. ການເສຍຫາຍ ງ. ເຈົ້ານາຍໂລມໃຈຮ້າຍ

ຈ. ຜູ້ມີຜີສິງ

**59** ດັ່ງນັ້ນປະຊາຊົນຂໍໃຫ້ ພະເຢຊູ ໄປເພາະເຂົາຢ້ານສອງສິ່ງໃດ?

______________________ ແລະ ______________________

**60** ໃນຄຳເວົ້າຕໍ່ໄປນີ້ ມີຄຳໃດທີ່ອາດຄ້າຍຄືກັບຊາວກາດາລານັ້ນ? (ເລືອກ)

ກ. "ຂ້ອຍບໍ່ຢາກຕິດຕາມພະອົງເທື່ອ ເພາະຕ້ອງເລີກບໍ່ຂາຍເຫຼົ້າ ຢາຝິ່ນ ຊາ."

ຂ. "ຂ້ອຍບໍ່ຢາກເປັນຄຼິດສະຕຽນເພາະບໍ່ຢາກພົວພັນກັບຜູ້ທີ່ຂັບໄລ່ຜີອອກ."

ຄ. "ຂ້ອຍບໍ່ຢາກເປັນຄຼິດສະຕຽນເພາະບໍ່ຢາກຖະຫວາຍເງິນ."

ງ. "ຂ້ອຍບໍ່ຢາກເຊື່ອສິ່ງໃດທີ່ບໍ່ເຫັນເປັນຕົວຈິງ."

ຈ. "ຂ້ອຍບໍ່ຢາກເປັນຄຼິດສະຕຽນເພາະຈຳເປັນຕ້ອງຕົວະຈຶ່ງຫາກິນໄດ້."

ສ. "ຂ້ອຍບໍ່ຢາກໃຫ້ໝູ່ກັບຍາດພີ່ນ້ອງເຍາະເຍີ້ຍຈຶ່ງບໍ່ຍອມເປັນຄຼິດສະຕຽນ."

ຊ. "ບໍ່ຢາກເປັນຄຼິດສະຕຽນເພາະຢ້ານອຳນາດຂອງ ພະເຈົ້າຜູ້ຍິ່ງໃຫຍ່."



**61** ແຕ່ຄົນທີ່ດີຂຶ້ນມາຈາກຜີສິງນັ້ນບໍ່ເປັນຢ່າງພວກເຂົາ. (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້)

ກ. ພະເຢຊູ ເຮັດໃຫ້ເພິ່ນ ______________ ມາແລ້ວ.

ຂ. ເພິ່ນຈຶ່ງຢາກ ______________ ພະອົງໄປ.

ຄ. ຜົນສຸດທ້າຍເພິ່ນເວົ້າຄວາມ ______________ ແກ່ຍາດພີ່ນ້ອງ.

*ຂໍ້ສັງເກດ: ໃນເລື່ອງນີ້ຍັງມີຫຼາຍປະການທີ່ເຮົາຍັງບໍ່ໄດ້ຕອບຄື:*

*ເປັນຫຍັງຜີເຫຼົ່ານັ້ນຈຶ່ງເຂົ້າຕົວໝູ?*

*ເປັນຫຍັງຜີທຳລາຍຕົວໝູທັນທີ?*

*ເປັນຫຍັງ ພະເຢຊູອະນຸຍາດໃຫ້ດັ່ງນັ້ນ?*

*ພະຄຳພີບໍ່ໄດ້ບອກຄຳຕອບແຕ່ພວກເຮົາອາດຈະກະໄດ້ດັ່ງຕໍ່ໄປນີ້:*

1. *ພະເຢຊູ ໄດ້ໃຫ້ຜີເຫຼົ່ານັ້ນເຂົ້າໝູເພື່ອຈະບໍ່ທຳອັນຕະລາຍຕໍ່ຄົນ. ໃນ ມາລະໂກ 9:26 ເຫັນວ່າ ຜີຕົວດຽວ ເຮັດອັນຕະລາຍຕໍ່ຄົນໄດ້ ດັ່ງນັ້ນຖ້າວ່າມີຜີເປັນກອງທັບຍິ່ງຈະເຮັດອັນຕະລາຍໄດ້ຫຼາຍ ພະເຢຊູ ໃຫ້ໝູ ເຫຼົ່ານັ້ນຖືກອັນຕະລາຍແທນຄົນ.*
2. *ຫຼື ອາດຈະແມ່ນວ່າພະເຢຊູ ສະແດງຫຼັກທີ່ເຫັນກັບຕາວ່າຜີເຫຼົ່ານັ້ນໄດ້ອອກມາແທ້. ໃຫ້ຮ່ວມກັບໝູ່ໃນປະຊຸມ ອາດຈະຍົກປຶກສາຫາລືກັນເລື່ອງນີ້ອີກດ້ວຍ.*

**62** ຖ້າຫາກວ່າ ມີຄົນມາຖາມວ່າ ພະຄຳພີເວົ້າຄຳຂັດແຍ່ງກັນເລື່ອງມີຜູ້ດຽວຫຼືສອງຄົນທີ່ມີຜີສິງ ທ່ານຄວນຈະຕອບ ເຂົາຢ່າງໃດ? ________________________________________

________________________________________________________________

**63** ມາເຖິງນີ້ເຮົາຮຽນຮູ້ວ່າພະເຢຊູ ເຮັດການອັດສະຈັນຫຼາຍປະການຄື: ເລື່ອງຄົນຂີ້ທູດຜູ້ໜຶ່ງດີສະອາດ. ຊົງໂຜດຄົນໃຊ້ຂອງນາຍຮ້ອຍດີ. ຊົງໂຜດແມ່ເມຍຂອງເປໂຕ.

ກ. 3 ປະການນີ້ສະແດງອຳນາດຂອງ ພະເຢຊູ ເໜືອຫຍັງ? ______________________

ຂ. ການຫ້າມລົມແລະທະເລສະແດງວ່າໃຜມີອຳນາດເໜືອດິນຟ້າອາກາດ? ____________

ຄ. ໃນເຂດແດນຊາວກາດາລາເປັນຫຼັກວ່າພະເຢຊູ ມີອຳນາດເໜືອຫຍັງອີກ? ___________

*ໃນອີກສອງບົດຕໍ່ໄປນີ້ ເຮົາຈະຮຽນເລື່ອງການອັດສະຈັນຂອງພະເຢຊູ ອີກ. ໃຫ້ເຮົາຍົກສຽງຂອບໃຈພະອົງວ່າອຳນາດຂອງ ພະອົງນັ້ນບໍ່ປ່ຽນແປງມາເຖິງທຸກວັນນີ້.*

*ຢ່າລືມບົດເສັງ!*

## ຄຳຕອບ:

**1** *ກ. ຄວາມອັດສະຈັນ. ຂ. ພວກສິດ.*

**2** *10 ປະການ*

**3** *ຂ. ຖືກ*

**4** *ຄ. ຖືກ*

**5** *ກ. ໜັງ ຂ. ໃຫ້ແຍກຈາກຄົນອື່ນ*

**6** *ກ. ຖືກ*

**7** *ກ. ປາກົດມາໃນຜິວໜັງ ຂ. ໃຫ້ແຍກຈາກຄົນອື່ນ*

**ຄຳຕອບ (ຕໍ່):**

**8** *ຢຽດມືອອກຖືກເພິ່ນ*

**9** *ພະເຢຊູ ຢຽດມືອອກຖືກເພິ່ນ*

**10** *ກ. ພະຍາດໃນຜິວໜັງ ຂ. ໃຫ້ແຍກອອກໄປຢູ່ຕ່າງຫາກ*
*ຄ. ດ້ວຍຢຽດມືອອກຖືກພວກເຂົາ*

**11** *ກ. ຂ. ຄ. ແລະ ຈ. ຖືກ*

**12** *ຊ່ວຍນາຍຮ້ອຍນັ້ນ*

**13** *ບໍ່*

**14** *ຖ່ອມໃຈ.*

**15** *ກ. ຖືກ*

**16** *ຂ. ຖືກ*

**17** *ຄ. ຖືກ*

**18** *ເຮັດ*

**19** *ຄ.ຖືກ*

**20** *ກ. ຈະດີຂຶ້ນມາ ຂ. ເຊື່ອ.*

**21** *ຍີວ*

**22** *ຄວາມເຊື່ອ*

**23** *ກ. ການຖ່ອມໃຈລົງ ຂ. ຄວາມເຊື່ອ.*

**24** *ກ. ແລະ ຄ. ຖືກ*

**25** *ກ. ນາຍຮ້ອຍ ຂ. ຈະຖືກຖິ້ມອອກໄປໃນທີ່ມືດພາຍນອກ ຈະມີສຽງຮ້ອງໃຫ້ແລະຂົບແຂ້ວຢູ່*
*ຄ. ອັບລາຮາມ ອີຊາກ ແລະ ຢາໂຄບ ໃນແຜ່ນດິນສະຫວັນ ງ. ດີ.*

**26** *ກ. ໄກ ຂ. ກ່າວ*

**27** *ກ. ຖ່ອມໃຈລົງ ຂ. ຄວາມເຊື່ອ*
*ຄ. ປິ່ນປົວຈາກທາງໄກໄດ້ ລະປົວດ້ວຍຄຳກ່າວເທົ່ານັ້ນ*

**28** *ເປໂຕ*

**29** *ງ. ຖືກ*

**30** *ກ. ໄຂ້ ຂ. ໄຂ້ກໍ່ເຊົາ ຄ. ບົວລະບັດພະອົງ*

**31** *ກ. ຖືກ*

**32** *ຄ. ແລະ ງ. ຖືກ*

**33** *ກ. ພະເຢຊູ ຂ. ໃນທັງທີ*

**34** *ເອຊາຢາ 53:4*

**35** *ກ. ເອຊາຢາ 53:4 ຂ. ອຳນາດ.*

**ຄຳຕອບ (ຕໍ່):**

**36** *ກ. ນອນ ຂ. ໂອ້! ຄົນມີຄວາມເຊື່ອນ້ອຍເອີຍເປັນຫຍັງພວກເຈົ້າຈຶ່ງຢ້ານ.*

*ຄ. ພະອົງຫ້າມລົມແລະທະເລ.*

**37** *ກ. ພະຍາດ. ຂ.ລົມແລະທະເລ.*

**38** *ກ. ອັດສະຈັນໃຈຫຼາຍ*

*ຂ. ທ່ານຜູ້ນີ້ມາຈາກທີ່ໃດນໍ! ຈົນວ່າລົມແລະທະເລກໍ່ຍອມຟັງເພິ່ນ*

**39** *ນາຍຮ້ອຍໂລມ*

**40** *ພະຍາດ ລົມແລະທະເລ*

**41** *ກາດາລາ*

**42** *ກ. ຖືກກັບ 2 ຂ. ຖືກກັບ 4 ຄ. ຖືກກັບ 1 ງ. ຖືກກັບ 3*

**43** *ຄວາມຂັດແຍ່ງກັນ.*

**44** *ຂັດແຍ່ງ.*

**45** *ຂ. ຖືກ*

**46** *ກ.ໄຊ ຂ. ວອນ ຄ. ພອນ*

**47** *ກ. ຕຳຫຼວດ ຂ. ເດັກ*

**48** *ຄຳຫຍໍ້*

**49** *ກ. ທີ່ເວົາກົງກັນຂ້າມ ຂ. ເຮັດໃຫ້ສັ້ນເຂົ້າ*

**50** *ມາລະໂກ*

**51** *ເຖົາແກ່ບາງຄົນຂອງພວກຢິວ*

**52** *ຄ. ຖືກ*

**53** *ບໍ່ມີຄຳຕອບຕາຍຕົວໃຫ້ປຶກສາຫາລືກັບ ໝູ່ທີ່ຮຽນ*

**54** *ກ. ງ. ແລະ ຈ. ຖືກ*

**55** *ໃຫ້ພະອົງອອກຈາກເຂດແດນຂອງເຂົາ*

**56** *ກ. ພະເຢຊູ. ຂ. ບ້ານຍາດພີ່ນ້ອງ*

**57** *ກ. ຖືກ*

**58** *ກ. ແລະ ຄ. ຖືກ*

**59** *ຢ້ານລິດອຳນາດ ແລະ ຢ້ານການເສຍຫາຍ.*

**60** *ກ. ຂ. ຄ. ຈ. ແລະ ຊ. ຖືກ*

**61** *ກ. ດີ ຂ. ຕິດຕາມ ຄ. ພິຍານ.*

**62** *ຜູ້ທີ່ບັນທຶກຜູ້ ໜຶ່ງລາຍງານວ່າມີສອງຄົນແຕ່ອີກຜູ້ ໜຶ່ງຫຍໍ້ບັນທຶກເລື່ອງແຕ່ຜູ້ດຽວບໍ່ແມ່ນຂັດແຍ່ງ ກັນແມ່ນແຕ່ຜູ່ ໜຶ່ງຫຍໍ້ເລື່ອງໄວ້. (ຕອບຄຳຄ້າຍຄືກັນກໍ່ໄດ້)*

**63** *ກ. ພະຍາດ. ຂ. ພະເຢຊູ. ຄ. ຜີ.*